## Attachment 3: Information and Approval Letters

ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ພະແນກສາທາລະນະສຸກແຂວງ

ໂຮງໝໍແຂວງອຸດົມໄຊ

ເລກທີ່.....972...../ຣໝຂ

ອຸດົມໄຊ,ວັນທີ...25-9-15

# ຂໍ້ຕົກລົງ

ຂອງຄະນະອຳນວຍການໂຮງໝໍແຂວງອຸດົມໄຊ.

ວ່າດ້ວຍການອະນຸມັດໃຫ້ພະນັກງານໂຮງໝໍແຂວງ ລົງເຄື່ອນໄຫວບໍລິການກວດ,ປິ່ນປົວ ພະຍາດແລະຊ່ວຍເຫຼືອເຄື່ອງມືອຸປະກອນການແພດທີ່ຈຳເປັນໃຫ້ແກ້ສຸກສາລາ.

- ອີງຕາມ : ແຜນລົງເຄືອນໄຫວເລກທີ879/ຣໝຂລົງວັນທີ 22/0/2015
- ອີງຕາມ: ການຄົ້ນຄ້ວາເຫັນດີເປັນເອກະພາບຂອງວິຊາການ ແລະຄະນະອຳນວຍການໂຮງໝໍ ຄັ້ງວັນທີ 24/09/2015

**ຄະນະອຳນວຍການຕົກລົງ**

ມາດຕາ I ອະນຸມັດໃຫ້ພະນັກງານໂຮງໝໍແຂວງອຸດົມໄຊ .ຈຳນວນ 05 ທ່ານ . ລົງເຄື່ອນໄຫວບໍລິການກວດ,ປິ່ນປົວ ພະຍາດແຂ້ວ,ຕາ ກວດແມ່ມານແລະເດັກນ້ອຍທີ່ສຸກສາລາບ້ານຂວາງ,ເມືອງນາໝໍ້ ແລະຊ່ວຍເຫຼືອເຄື່ອງມືອຸປະກອນການແພດທີ່ຈຳເປັນໃຫ້ແກ້ສຸກສາລາ.ເປັນເວລາ 04 ວັນ. ເລີມວັນທີ 30 ກັນຍາ ເຖິງ 3 ຕຸລາ 2015

ເຊິ່ງມີລາຍຊື່ດັ່ງລຸ່ມນີ້ :

1. ດຣ ເພັດສະໝອນ ອິນດາລາ ( ທ່ານໝໍຕາ).ໂຮງໝໍແຂວງອຸດົມໄຊ.
2. ດຣ ນ ແສງຫຼ້າ ລາວເຊີນ (ທ່ານໝໍຕາ)
3. ດຣ ນ ສຸລິມາລາ ວົງປະຈິດ ( ທ່ານໝໍແຂ້ວ).
4. ດຣ ນ ມະໄລທອງ ສຸກກະເສີມ (ທ່ານໝໍແຂ້ວ).
5. ທ່ານ ພອນທະວີ ອິນທະວົງສາ (ພະຍາບານຕາ).

( ການສິ້ນເປືອງຕ່າງໆໂຄງການມູນນິທິຮັບຜິດຊອບ ).

ມາດຕາ II: ມອບໃຫ້ຫ້ອງການ,ຈັດຕັ້ງ,ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ III: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການໂຮງໝໍແຂວງອຸດົມໄຊ

ດຣ. ກົງເພັດ ໄຊຍະລາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອຸດົມໄຊ

ພະແນກສາທາລະນະສຸກແຂວງ

ເລກທີ່: 1758 /ພສທ.

ວັນທີ່ 22 SEP 2015

## ໃບແຈ້ງການ

**ເຖິງ:** ຫົວໜ້າຫ້ອງການສາທາເມືອງນາໝໍ້ ແຂວງອຸດົມໄຊ.

**ເລື່ອງ:** ແຈ້ງການເຖິງບັນດາບ້ານ ທີ່ຂຶ້ນກັບສຸກສາລາບ້ານຂວາງ ເຂົ້າຮັບການບໍລິການກວດ ແລະ ປິ່ນປົວ ພະຍາດ ແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ຜູ້ໃຫຍ່ ກັບທີມງານແພດ ຈາກໂຮງໝໍແຂວງອຸດົມໄຊ.

- ອີງຕາມ: ແຜນການຊ່ວຍເຫຼືອ ຂອງມູນນິທິຟື້ນຟູສຸຂະພາບລາວ ປະຈໍາປີ 2015 ກ່ຽວກັບວຽກງານ ຮັກສາສຸຂະພາບ ແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ການຊ່ວຍເຫຼືອເຄື່ອງມືອຸປະກອນການແພດ.

ທາງວິຊາການແພດ ຈາກໂຮງໝໍແຂວງອຸດົມໄຊ ສົມທົບກັບມູນນິທິຟື້ນຟູສຸຂະພາບລາວ ຈະໄດ້ລົງເຄື່ອນໄຫວ ບໍລິການກວດ ແລະ ປິ່ນປົວ ພະຍາດ ແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ຜູ້ໃຫຍ່ ໃຫ້ພໍ່ແມ່ປະຊາຊົນ ຢູ່ ສຸກສາລາບ້ານຂວາງ ເມືອງນາໝໍ້ ເປັນເວລາ 3 ວັນ ຄືວັນທີ່ 1-3 ເດືອນ 10 ປີ 2015 ພ້ອມກັບຊ່ວຍເຫຼືອ ເຄື່ອງມືອຸປະກອນການແພດທີ່ຈໍາເປັນ ໃຫ້ແກ່ສຸກສາລາບ້ານຂວາງ.

ດັ່ງນັ້ນ ຈຶ່ງໄດ້ແຈ້ງມາຫ້ອງການສາທາເມືອງ ຈົ່ງແຈ້ງການເຖິງສຸກສາລາບ້ານຂວາງ ເພື່ອກະກຽມສະຖານທີ່ ບໍລິການກວດ ໃຫ້ແກ່ທີມງານ ພ້ອມກັບແຈ້ງການໃຫ້ເຖິງພໍ່ແມ່ປະຊາຊົນ ຢູ່ບັນດາບ້ານທີ່ຮັບຜິດຊອບ ເຂົ້າມາ ຮັບບໍລິການກວດ ແລະ ປິ່ນປົວພະຍາດແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ຜູ້ໃຫຍ່ ນໍາໂຄງການ ດັ່ງກ່າວດ້ວຍ (ກວດ ແລະ ປິ່ນປົວ ແມ່ນບໍ່ໄດ້ເສຍຄ່າ).

**<u>ໝາຍເຫດ:</u>** ກະກຽມພະນັກງານຈາກໂຮງໝໍເມືອງເຂົ້າຮ່ວມນໍາ ຈໍານວນ 01 ທ່ານ (ທ່ານໝໍທົ່ວໄປ 01 ທ່ານ) ສ່ວນຄ່າໃຊ້ຈ່າຍອັດຕາກິນ ແມ່ນມູນນິທິຟື້ນຟູສຸຂະພາບລາວ ເປັນຜູ້ຮັບຜິດຊອບ.

ຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ

ກະຊວງສາທາລະນະສຸກ ພະແນກ ສາທາລະນະສຸກ ແຂວງອຸດົມໄຊ

ດຣ. ຄໍາພັນ ໄຊຍະວົງ

Dr Khamphan XAYAVONG

ສອບຖາມເພີ່ມເຕີມພົວພັນ: ດຣ. ເພັດສະໝອນ ອິນດາລາ ໂທ: 22203708, Fax: 081-212947